ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ວັດທະນະຖາວອນ

---

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1502 /ກປຝ

ນະຄອນຫຼວງວຽງຈັນ, ວັນທີ 11 OCT 2013

ຮຽນ : **ທ່ານ ຫົວໜ້າຫ້ອງການ ທີ່ປຶກສາ ທູດ ເສດຖະກິດ-ການຄ້າ ສປ ຈີນ ປະຈຳ ສປປ ລາວ**

ເລື່ອງ : ສະເໜີກ່ຽວກັບ ການດຳເນີນ ການເຊັນບົດບັນທຶກຂໍ້ກຳນົດເງື່ອນໄຂການສົ່ງອອກ ເຂົ້າສານ ຂອງ ສປປ ລາວ ໄປຍັງ ສປ ຈີນ

- ອີງຕາມ ການຊີ້ນຳ ຂອງທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ;
- ອີງໃສ່ ໜັງສື ຂອງກົມຮ່ວມມືສາກົນ, ອົງການ AQSIQ ແຫ່ງ ສປ ຈີນ ສະບັບເລກທີ [2013] 982 ກ່ຽວກັບ ຮ່າງຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມພືດ ໃນການນຳເຂົ້າ ເຂົ້າສານ ຈາກ ສປປ ລາວ ເຂົ້າໄປ ສປ ຈີນ;
- ອີງຕາມ ການຊີ້ນຳ ຂອງທ່ານລັດຖະມົນຕີ ຊ່ວຍວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ລົງວັນທີ 10 ຕຸລາ 2013;
- ອີງໃສ່ ຂໍ້ຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1889/ກປ, ລົງວັນທີ 09/08/2012 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມປູກຝັງ

ໂດຍສືບຕໍ່ຜັນຂະຫຍາຍ ການຈັດຕັ້ງປະຕິບັດ ເນື້ອໃນຈິດໃຈ ໝາກຜົນການຢ້ຽມຢາມ ສປ ຈີນ ຂອງການນຳສູງສຸດ ຂອງ ສປປ ລາວ ໃນ ວັນທີ 26-30 ເດືອນກັນຍາ 2013 ທີ່ຜ່ານມາ ແລະເຫັນໄດ້ເຖິງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ອັນສູງສົ່ງ ທີ່ມີມາແຕ່ດົນນານ ຂອງພັກ-ລັດ ແລະ ປະຊາຊົນ ລາວ-ຈີນ, ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ ຂໍຖືເປັນກຽດຢ່າງຍິ່ງ ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງ ມາຍັງ ທ່ານຫົວໜ້າຫ້ອງການ ທີ່ປຶກສາ ທູດເສດຖະກິດ-ການຄ້າ ສປ ຈີນ ປະຈຳ ສປປ ລາວ ທີ່ໄດ້ເອົາໃຈໃສ່ ໃຫ້ການຊ່ວຍເຫຼືອໃນການປະສານສົມທົບ ໃຫ້ແກ່ຝ່າຍລາວ ເພື່ອແຈ້ງ ແລະ ລາຍງານໃຫ້ ອົງການ AQSIQ ແຫ່ງ ສປ ຈີນ ໃນຫຼາຍວຽກງານ ຈົນສາມາດບັນລຸ ການລົງນາມ ລະຫວ່າງ ລັດຖະບານ ສປປ ລາວ ແລະ ສປ ຈີນ ທີ່ທັງສອງຝ່າຍ ໄດ້ເຊັນ ບົດບັນທຶກ ຂໍ້ກຳນົດເງື່ອນໄຂ ດ້ານສຸຂະນາໄມພືດ ກ່ຽວກັບການນຳເຂົ້າ ສປ ຈີນ ຈາກ ສປປ ລາວ 3 ພືດ ມີຄື: ມັນຕົ້ນແຫ້ງ, ກ້ວຍ ແລະ ໝາກໂມ ໃນວັນທີ 26 ເດືອນກັນຍາ 2013 ທີ່ຜ່ານມາ ທີ່ນະຄອນຫຼວງ ປັກກິ່ງ, ສປ ຈີນ, ຊຶ່ງມັນແມ່ນ ຂີດໝາຍໃໝ່ແຫ່ງຜົນສຳເລັດ ໃນເບື້ອງຕົ້ນອີກ ບາດກ້າວໜຶ່ງ ຂອງການກະກຽມຜະລິດຕະພັນກະສິກຳ ແລະ ປ່າໄມ້ ລາວ ເພື່ອສົ່ງອອກໄປຍັງ ສປ ຈີນ.

ແຕ່ແນວໃດກໍ່ດີ, ຫຼັກການແຫ່ງການຮ່ວມມືໃໝ່ແຫ່ງການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ຂອງພວກເຮົາໃນຂົງເຂດຄ້າຂາຍຜະລິດຕະພັນກະສິກຳ ແລະ ປ່າໄມ້ ແມ່ນຍັງມີທ່າແຮງຫຼາຍດ້ານ ທີ່ທັງສອງຝ່າຍພວກເຮົາຈະຕ້ອງໄດ້ຖະໜອມສະໜັບສະໜູນ ແລະ ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ. ນະໂອກາດນີ້ ຝ່າຍລາວ ພວກເຮົາ ຂໍສະເໜີ ດ້ວຍຄວາມຈິງໃຈ ນຳຝ່າຍຈີນ ກ່ຽວກັບ ການສືບຕໍ່ໃຫ້ສຳເລັດ ເຊັນບົດບັນທຶກ ຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມພືດ ກ່ຽວກັບ ການສົ່ງອອກເຂົ້າສານ ຂອງ ສປປ ລາວ ໄປຍັງ ສປ ຈີນ ຕື່ມອີກ, ເນື່ອງຈາກວ່າ ຝ່າຍລາວ ໄດ້ຜ່ານການຄົ້ນຄວ້າ ທາງດ້ານວິຊາ

ການແລ້ວ ເຫັນວ່າ ເໝາະສົມ ແລະ ເຫັນດີເປັນເອກະພາບຮັບເອົາເນື້ອໃນ ດັ່ງກ່າວນັ້ນ ເປັນທີ່ຮຽບຮ້ອຍ. ພ້ອມດຽວກັນ ພວກເຮົາກໍໄດ້ຮັບການຊີ້ນຳ ຈາກການນຳຂັ້ນເທິງ ຂອງ ສປປ ລາວ ພວກເຮົາ ຂໍຖືເປັນກຽດຢ່າງສູງ ສະເໜີ:

1. ແຈ້ງສົ່ງ ເອກະສານຕອບຮັບເຫັນດີ ຂອງກົມປູກຝັງ ທີ່ໄດ້ສົ່ງໃຫ້ກົມຮ່ວມມືສາກົນ ( 国际合作司 ) ແລະ ກົມນຳເຂົ້າ-ສົ່ງອອກ ດ້ານຄວາມປອດໄພ ສະບຽງອາຫານ ( 进出口食品安全局 ) ແຫ່ງ ສປ ຈີນ, ສະບັບ ເລກທີ 1417, ລົງວັນທີ 24 ກັນຍາ 2013.
2. ພວກເຮົາ ມີຄວາມປະສົງຢ່າງສູງ ສະເໜີເຊີນ ຝ່າຍຈີນ (ອົງການ AQSIQ) ເດີນທາງໄປຢ້ຽມຢາມ ສປປ ລາວ ແລະ ຖືເອົາໂອກາດນັ້ນ ຮ່ວມລົງລາຍເຊັນ ບົດບັນທຶກ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ກ່ຽວກັບ ການສົ່ງອອກເຂົ້າສານ ຂອງ ສປປ ລາວ ໄປຍັງ ສປ ຈີນ ທີ່ນະຄອນຫຼວງວຽງຈັນ ໃນເວລາອັນເໝາະສົມ ຫຼື ວ່າ ຖ້າຫາກ ຝ່າຍຈີນ ຊີ້ແນະ ໃຫ້ຝ່າຍລາວ ໄປລົງລາຍເຊັນ ທີ່ສປ ຈີນ ນັ້ນ ກໍຂໍໃຫ້ຝ່າຍຈີນເປັນຜູ້ພິຈາລະນາ ຕາມທາງຄວນດ້ວຍ.
3. ສຳລັບຝ່າຍລາວ ແມ່ນພ້ອມແລ້ວ ທີ່ຈະລົງລາຍເຊັນໃນຂໍ້ກຳນົດດັ່ງກ່າວຂ້າງເທິງ, ທັງນີ້ ຍ້ອນວ່າ :ເຂົ້າສານ ແມ່ນຜະລິດຕະພັນກະສິກຳຕົ້ນຕໍ ຂອງຊາວກະສິກອນລາວ ແມ່ນປັດໄຈສຳຄັນ ທີ່ສາມາດສ້າງລາຍຮັບໃຫ້ ປະຊາຊົນຊາວໄຮ່ນາ ຊຶ່ງເປັນສ່ວນໃຫຍ່ ຂອງພົນລະເມືອງ ແລະ ຊ່ວຍໃຫ້ເຂົາເຈົ້າຫຼຸດພົ້ນອອກຈາກ ຄວາມທຸກຍາກໄດ້ ຕາມແນວທາງຂອງພັກ ແລະ ລັດ ວາງອອກ.

ກົມປູກຝັງ ຫວັງຢ່າງຍິ່ງວ່າ ທ່ານຈະຊ່ວຍປະສານໄປຍັງ ອົງການ AQSIQ ແລະ ພວກຂ້າພະເຈົ້າ ຂໍສະແດງ ຄວາມຍິນດີ ຢ່າງສຸດອົກສຸດໃຈ ຮັບເອົາຄຳຕອບຊີ້ແນະ ຈາກທ່ານ.

ດັ່ງນັ້ນ, ຈຶ່ງໄດ້ຮຽນສະເໜີມາຍັງທ່ານ ພິຈາລະນາ ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,
ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ສຳເນົາບ່ອນສົ່ງ:

| | | |
|---|---|---|
| - ທ່ານ ລັດຖະມົນຕີ ວ່າການ ແລະ ຊ່ວຍວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ທ່ານ ລະ | 1 ສະບັບ | "ເພື່ອຊາບ ແລະ ໃຊ້ຕາງລາຍງານ" |
| - ຫ້ອງການ ຄະນະກຳມະທິການ ຮ່ວມມື ລາວ-ຈີນ | 1 ສະບັບ | "ເພື່ອຊາບ ແລະ ໃຊ້ຕາງລາຍງານ" |
| - ທີ່ປຶກສາ ທູດການຄ້າ ສປປ ລາວ ປະຈຳ ສປ ຈີນ | 1 ສະບັບ | "ເພື່ອຊາບ" |
| - ກົມນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຄກ | 1 ສະບັບ | "ເພື່ອຊາບ" |
| - ກົມແຜນການ ແລະ ການຮ່ວມມື, ກະຊວງ ກປ | 1 ສະບັບ | "ເພື່ອຊາບ" |
| - ເກັບມ້ຽນ | 2 ສະບັບ | |